ຜ-ຟຟລ ຮ່ວມກັບພາກສ່ວນທ້ອງຖິ່ນ ລົງຕິດຕາມຊີວິດການເປັນຢູ່ ປະຊາຊົນບ້ານຈັດສັນ ເຂດອ້ອມເຂື່ອນໄຟຟ້ານ້ຳຄານ 2-3

ຜ-ຟຟລ







ໃນວັນທີ 29 ກັນຍາ 2026 ຄະນະຈາກ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຮ່ວມກັບພາກສ່ວນການນຳ ຂອງແຂວງຫຼວງພະບາງ ແລະ ເມືອງຊຽງເງິນ ລົງພື້ນທີ່ຕິດຕາມຊີວິດການເປັນຢູ່ຂອງປະຊາຊົນໃນເຂດອ້ອມເຂື່ອນໄຟຟ້ານ້ຳ ຄານ 2-3 ພາຍຫຼັງປະຊາຊົນໄດ້ຮັບການຟື້ນຟູຊີວິດການເປັນຢູ່ ຈາກໂຄງການກໍ່ສ້າງເຂື່ອນໃນໄລຍະດຳເນີນໂຄງການ.

ການລົງພື້ນທີ່ຄັ້ງນີ້ ນຳໂດຍ ທ່ານ ສີລິພົມ ແສງອ່ອນແກ້ວ ຮອງຜູ້ອຳນວຍການໃຫຍ່ ຜ-ຟຟລ, ພ້ອມດ້ວຍ ທ່ານ ສົມມະລີ ຄຳເກັ່ງ ຮອງປະທານສະພາປະຊາຊົນແຂວງຫຼວງພະບາງ ແລະ ທ່ານ ສຸກດາວັນ ພັນຈັກຂັນ ເລຂາຄະນະບໍລິຫານງານພັກ ເມືອງຊຽງເງິນ, ພ້ອມດ້ວຍຄະນະ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ໃນໂອກາດນີ້ ຄະນະໄດ້ມີການປະຊຸມຮ່ວມກັນ ພ້ອມທັງລົງພື້ນທີ່ຕົວຈິງຕິດຕາມສະພາບຊີວິດ ແລະ ການເປັນຢູ່ຂອງ ປະຊາຊົນພາຍຫຼັງຈາກໄດ້ຮັບການຟື້ນຟູຊີວິດການເປັນຢູ່ຕາມຂອບເຂດຂອງໂຄງການໃນໄລຍະກໍ່ສ້າງເຂື່ອນ. ພ້ອມທັງຮັບ ຟັງສະພາບການດຳລົງຊີວິດ, ການປັບຕົວ ແລະ ສະພາບການເປັນຢູ່ຂອງປະຊາຊົນໃນພື້ນທີ່.

ການລົງຕິດຕາມໃນຄັ້ງນີ້ ຍັງເປັນໂອກາດໃຫ້ ຜ-ຟຟລ ແລະ ພາກສ່ວນທ້ອງຖິ່ນ ໄດ້ພົບປະ ແລະ ແລກປ່ຽນຂໍ້ມູນກັບ ປະຊາຊົນໂດຍກົງ ເພື່ອຮັບຮູ້ສະພາບຕົວຈິງຈາກພື້ນທີ່ ແລະ ນຳຂໍ້ມູນທີ່ໄດ້ຮັບໄປເປັນຂໍ້ມູນປະກອບໃນການຕິດຕາມ ວຽກງານຕໍ່ໄປ.

ທັງນີ້, ການລົງພື້ນທີ່ໃນຄັ້ງນີ້ ສະທ້ອນເຖິງການໃຫ້ຄວາມສຳຄັນຂອງ ຜ-ຟຟລ ຕໍ່ການປະສານງານກັບພາກລັດ ແລະ ທ້ອງຖິ່ນ ພ້ອມທັງໃຫ້ຄວາມສຳຄັນຕໍ່ຊີວິດການເປັນຢູ່ຂອງປະຊາຊົນອ້ອມຂ້າງເຂື່ອນຢ່າງຕໍ່ເນື່ອງ.